# ຟັງເພື່ອນມິດຄົນລາວອະທິບາຍຄຳເຫັນຂອງທ່ານ ສີຈິ້ນຜິງ

ນັບແຕ່ໄດ້ເລີ່ມພິມຈຳໜ່າຍເປັນຄັ້ງທຳອິດ ໃນງານວາງສະແດງປຶ້ມສາກົນແຟຣງເຝີດຂອງເຢຍລະມັນ ໃນເດືອນຕຸລາ 2014 ເປັນຕົ້ນມາ, ປຶ້ມ "ສີຈິ້ນຜິງວ່າດ້ວຍການປົກຄອງປະເທດ ແລະ ບໍລິຫານລັດ" ໄດ້ພິມຈຳໜ່າຍໄປແລ້ວ 4 ເຫຼັ້ມ ເປັນ 42 ພາສາ, ໄດ້ພິມຈຳໜ່າຍຢູ່ 180 ກວ່າປະເທດ ແລະ ເຂດແຄວ້ນ ໄດ້ກາຍເປັນປຶ້ມຜູ້ນຳທີ່ໄດ້ພິມເປັນພາສາຫຼາຍທີ່ສຸດ, ພິມຈຳໜ່າຍໃນຂອບເຂດກວ້າງທີ່ສຸດ ແລະ ມີຊື່ສຽງທີ່ສຸດໃນໂລກ ໃນປັດຈຸບັນ.

ຢູ່ລາວ, ມີຜູ້ແປ, ຜູ້ອ່ານ ແລະ ຜູ້ໂຄສະນາເຜີຍແຜ່ປຶ້ມ "ສີຈິ້ນຜິງວ່າດ້ວຍການປົກຄອງປະເທດ ແລະ ບໍລິຫານລັດ" ຫຼາຍທ່ານ, ພວກເຂົາເຈົ້າໄດ້ຖືເອົາຕົວໜັງສືເປັນສື່ ແລະ ໄດ້ກ່າຍຂົວເຊື່ອມຕໍ່ເພື່ອທຳຄວາມເຂົ້າໃຈລະຫວ່າງປະຊາຊົນ. ໃນລາຍການພາກນີ້, ພວກເຮົາຈະແນະນຳເລື່ອງລາວກ່ຽວກັບບັນດາທ່ານເຫຼົ່ານີ້ ທີ່ມີສາຍພົວພັນກັບ "ຄຳເຫັນຂອງທ່ານ ສີຈິ້ນຜິງ" ເພື່ອຮັບຮູ້ເຖິງຄວາມອາດເປັນໄປໄດ້ແຫ່ງການຮ່ວມມືລະຫວ່າງ ລາວ-ຈີນ ໃນອະນາຄົດ.

## ມີຄວາມຄິດຄວາມເຫັນຈາກການຊຸກຍູ້ການປົກຄອງປະເທດດ້ວຍກົດໝາຍຢ່າງຮອບດ້ານຂອງຈີນ



ຄຳເຫັນສຳຄັນຂອງທ່ານ ສີຈິ້ນຜິງ ປະທານປະເທດຈີນ ກ່ຽວກັບການປົກຄອງປະເທດດ້ວຍກົດໝາຍຢ່າງຮອບດ້ານ ເປັນການປະຕິວັດທີ່ເລິກເຊິ່ງໃນຂົງເຂດປົກຄອງປະເທດ ແລະ ບໍລິຫານລັດ.

ນັບແຕ່ກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດຂອງພັກກອມມູນິດຈີນຄັ້ງທີ 18 ເປັນຕົ້ນມາ, ການສ້າງສາດ້ານການປົກຄອງປະເທດດ້ວຍກົດໝຍຂອງຈີນໄດ້ຈາກ "ການປົກຄອງປະເທດດ້ວຍກົດໝາຍ" ຂະຫຍາຍມາເປັນ "ການປົກຄອງປະເທດດ້ວຍກົດໝາຍ ຢ່າງຮອບດ້ານ" ພ້ອມທັງໄດ້ຈັດເອົາການປົກຄອງປະເທດດ້ວຍກົດໝາຍຢ່າງຮອບດ້ານ ເຂົ້າເປັນເນື້ອໃນສຳຄັນຂອງຍຸດທະສາດປົກຄອງປະເທດ ແລະ ບໍລິຫານລັດ ຂອງພັກກອມມູນິດຈີນ. ການປົກຄອງປະເທດດ້ວຍກົດໝາຍຢ່າງຮອບດ້ານ ໄດ້ກ່າວເນັ້ນໜັກເຖິງການຍຶດໝັ້ນ ແລະ ເປີດກວ້າງເສັ້ນທາງປົກຄອງດ້ວຍກົດໝາຍຂອງສັງຄົມນິຍົມທີ່ມີສີສັນພິເສດຂອງຈີນ, ຍຶດໝັ້ນການນຳພາຂອງພັກກອມມູນິດຈີນ, ປະຊາຊົນເປັນເຈົ້າຂອງປະເທດ ແລະ ປົກຄອງປະເທດ ດ້ວຍກົດໝາຍ ເປັນເອກະພາບກັນແບບກາຍອິນຊີ ພ້ອມທັງຍຶດໝັ້ນທຸກຄົນສະເໝີພາບກັນຢູ່ຕໍ່ໜ້າກົດໝາຍ.

ເດືອນພະຈິກ 2020, ສູນກາງພັກກອມມູນິດຈີນ ໄດ້ຈັດກອງປະຊຸມວຽກງານສະເພາະການປົກຄອງປະເທດດ້ວຍກົດໝາຍຢ່າງຮອບດ້ານຢູ່ນະຄອນຫຼວງປັກກິ່ງ ໂດຍໄດ້ສະເໜີ "ແນວຄິດສີຈິ້ນຜິງ ກ່ຽວກັບການປົກຄອງດ້ວຍກົດໝາຍ" ເຊິ່ງເປັນພາກສ່ວນສຳຄັນຂອງແນວຄິດສີຈິ້ນຜິງກ່ຽວກັບສັງຄົມນິຍົມທີ່ມີສີສັນພິເສດຂອງຈີນໃນຍຸກໃໝ່ ແລະ ເປັນພຶດຕິກຳພື້ນຖານ ແລະ ເຂັມທິດຕົວຈິງແຫ່ງການປົກຄອງປະເທດດ້ວຍກົດໝາຍຢ່າງຮອບດ້ານ.

ການປົກຄອງປະເທດດ້ວຍກົດໝາຍຢ່າງຮອບດ້ານ ສຸມໃສ່ການປົກປັກຮັກສາຄວາມຍຸຕິທຳ ແລະ ຄວາມເປັນທຳຂອງສັງຄົມ, ເພີ່ມທະວີການຮັບປະກັນດ້ານການປົກຄອງດ້ວຍກົດໝາຍ ແລະ ຮັບປະກັນສິດທິມະນຸດ, ເຮັດໃຫ້ປະຊາຊົນມີເສລີພາບທີ່ມອບໝາຍໂດຍກົດໝາຍຢ່າງເຕັມທີ່, ຮັບປະກັນໃຫ້ປະຊາຊົນຮູ້ສຶກມີຄວາມຍຸຕິທຳ ແລະ ຄວາມເປັນທຳ ໃນລະບຽບກົດໝາຍທຸກລາຍ, ການປະຕິບັດກົດໝາຍ ແລະ ຕຸລາການທຸກຂັ້ນຕອນ ແລະ ໃນການຊຳລະແກ້ໄຂທຸກຄະດີ.

ເຊື່ອໝັ້ນວ່າ ພາຍໃຕ້ການນຳພາຂອງສູນກາງພັກກອມມູນິດຈີນທີ່ຖື ສະຫາຍ ສີຈິ້ນຜິງ ເປັນແກນນຳຈະສາມາດປະສົບຜົນສຳເລັດອັນຈົບງາມ ໃນພາລະກິດສ້າງສາປະເທດສັງຄົມນິຍົມທີ່ມີສີສັນພິເສດຂອງຈີນໃນຍຸກໃໝ່ທີ່ເຂັ້ມແຂງຢ່າງແນ່ນອນ. ພາຍໃຕ້ການຊີ້ນຳ-ນຳພາອັນໝັ້ນຄົງເຂັ້ມແຂງ ຂອງເລຂາທິການໃຫຍ່ຂອງສອງພັກລາວ ແລະ ຈີນ, ການສ້າງຄູ່ຮ່ວມຊາຕາກຳລາວ-ຈີນ ຈະສາມາດປະສົບຜົນສຳເລັດທີ່ໃຫຍ່ຫຼວງກວ່າເກົ່າ. (ຂຽນໂດຍ: ທ່ານ ປອ. ດາວສະຫວັນ ເຄືອມີໄຊ ຮອງຫົວໜ້າສະຖາບັນການເມືອງ ແລະ ການປົກຄອງແຫ່ງຊາດ)

## ຈາກບ້ານສິບແປດຖ້ຳເຖິງການຫຼຸດຜ່ອນຄວາມທຸກຍາກຂອງລາວ



ປີ 2023, ຂ້າພະເຈົ້າເຄີຍໄປທັດສະນະສຶກສາຢູ່ບ້ານສິບແປດຖ້ຳ ແຂວງຫູໜານຂອງຈີນ, ເປັນບ້ານທີ່ປະທານປະເທດ ສີຈິ້ນຜິງ ທີ່ເຄີຍລົງໄປສຳຫຼວດ, ບ້ານນີ້ ເຮັດໃຫ້ຂ້າພະເຈົ້າ ມີຄວາມຮູ້ສຶກຢ່າງເລິກເຊິ່ງຈົນມາເຖິງປັດຈຸບັນ. ບ້ານສິບແປດຖ້ຳ ເຄີຍເປັນບ້ານເຂດພູດອຍທີ່ທຸກຍາກ, ປັດຈຸບັນ ລາຍຮັບສະເລ່ຍຕໍ່ຫົວຄົນຕໍ່ປີ ຂອງຊາວບ້ານດັ່ງກ່າວ ໄດ້ບັນລຸຫຼາຍກວ່າ 30.000 ຢວນ ແລະ ເປັນແຫຼ່ງທ່ອງທ່ຽວທີ່ໄດ້ຮັບຄວາມນິຍົມຊົມຊອບຈາກນັກທ່ອງທ່ຽວທັງຫຼາຍ.

ຢູ່ບ້ານສິບແປດຖ້ຳ, ສິ່ງທີ່ເຮັດໃຫ້ຂ້າພະເຈົ້າຮູ້ສຶກປະທັບໃຈທີ່ສຸດກໍຄື: ຊາວບ້ານທັງຫຼາຍບໍ່ໄດ້ລໍຖ້າການຊ່ວຍເຫຼືອ, ຫາກແມ່ນ "ສ້າງຄວາມເຂັ້ມແຂງດ້ວຍຕົນເອງ" ເຊັ່ນ: ການອອກແບບຜະລິດຕະພັນວັດທະນະທຳ, ການເປີດຣີສອດ ແລະ ອື່ນໆ ເຊິ່ງເຮັດໃຫ້ຂ້າພະເຈົ້າໄດ້ເຂົ້າໃຈຄວາມໝາຍເລິກເຊິ່ງທີ່ວ່າ: "ການຫຼຸດຜ່ອນຄວາມທຸກຍາກຕ້ອງປຸກລະດົມປະຊາຊົນກ່ອນ ແລະ ການຫຼຸດຜ່ອນຄວາມທຸກຍາກ ຕ້ອງຝຶກອົບຮົມປະຊາຊົນ" ຢ່າງແທ້ຈິງ.

ໃນການທັດສະນະສຶກສາຄັ້ງນີ້, ຂ້າພະເຈົ້າໄດ້ອ່ານເນື້ອໃນກ່ຽວກັບການຫຼຸດຜ່ອນຄວາມທຸກຍາກໃນປຶ້ມ "ສີຈິ້ນຜິງວ່າດ້ວຍການປົກຄອງປະເທດແລະບໍລິຫານລັດ", ເລີ່ມຮັບຮູ້ເຖິງ "ເຄັດລັບສຳເລັດຜົນ" ຂອງຈີນໃນການລຶບລ້າງຄວາມທຸກຍາກ ຄື: ເນັ້ນໃສ່ການນຳພາຂອງພັກ, ກຳນົດເປົ້າໝາຍ "ລຶບລ້າງຄວາມທຸກຍາກເດັດຖານ", ດ້ານໜຶ່ງພັດທະນາອຸດສາຫະກຳ ເພື່ອຊ່ວຍເຫຼືອກະສິກຳ ແລະ ອີກດ້ານໜຶ່ງ ກໍປົກປັກຮັກສາພູຂຽວນ້ຳໃສ ເພື່ອພັດທະນາເສດຖະກິດສີຂຽວ ເພື່ອບັນລຸການພັດທະນາຮອບດ້ານທີ່ "ຖືຄົນເປັນສຳຄັນທີ່ສຸດ". ໃນທີ່ສຸດ, ຄວາມຄິດສະຫຼາດ ທີ່ເອົາການອອກແບບຈາກຂັ້ນສູນກາງ ປະສານສົມທົບກັບການປະດິດສ້າງໃໝ່ຢູ່ຂັ້ນຮາກຖານແບບນີ້, ບໍ່ພຽງແຕ່ໄດ້ເຮັດໃຫ້ 832 ເມືອງຂອງຈີນ ຫຼຸດພົ້ນອອກຈາກຄວາມທຸກຍາກເທົ່ານັ້ນ, ແຕ່ຫາກຍັງໄດ້ເປັນບົດຮຽນສຳຄັນສຳລັບລາວ ແລະ ປະເທດພວມພັດທະນາທັງຫຼາຍ.

ໃນຊຸມປີຜ່ານມາ, ຈີນ ແລະ ລາວ ໄດ້ດຳເນີນການຮ່ວມມືຫຼາຍຮູບແບບ ໃນຂົງເຂດຫຼຸດຜ່ອນຄວາມທຸກຍາກ ເພື່ອຕອບສະໜອງກັບຄວາມປາຖະໜາຮ່ວມ ຂອງສອງປະເທດ ທີ່ປັບປຸງຊີວິດການເປັນຢູ່ຂອງປະຊາຊົນໃຫ້ດີຂຶ້ນ. ຕົວຢ່າງຄື: ຈີນໄດ້ຈັດຊຸດຝຶກອົບຮົມເຈົ້າໜ້າທີ່ ແລະ ນັກວິຊາການຢູ່ຫຼາຍທ້ອງຖິ່ນຂອງລາວ ເຊິ່ງໄດ້ເພີ່ມພະລັງຂັບເຄື່ອນໃຫ້ແກ່ການພັດທະນາທ້ອງຖິ່ນ; ອີງໃສ່ໂຄງການສາທິດດ້ານການຫຼຸດຜ່ອນຄວາມທຸກຍາກ, ຈີນໄດ້ເຜີຍແຜ່ເຕັກນິກປູກຝັງທີ່ທັນສະໄໝ ໃຫ້ແກ່ຊາວກະສິກອນລາວ ເພື່ອຍົກຜົນຜະລິດ ແລະ ຄຸນນະພາບດ້ານການຜະລິດໃຫ້ສູງຂຶ້ນ; ໂຄງການພື້ນຖານໂຄງລ່າງຕ່າງໆ ເຊັ່ນ: ເສັ້ນທາງລົດໄຟລາວ-ຈີນ, ທາງດ່ວນວຽງຈັນ-ວັງວຽງ ເປັນຕົ້ນ ໄດ້ຫຼຸດຕົ້ນທຶນດ້ານການຂົນສົ່ງໃຫ້ຕ່ຳລົງຢ່າງຫຼວງຫຼາຍ.

ຕໍ່ໄປພາຍໜ້າ, ພວກເຮົາຄວນລົງເລິກການຮ່ວມມືໃນຂົງເຂດຫຼຸດຜ່ອນຄວາມທຸກຍາກລະຫວ່າງ ລາວ-ຈີນ ບົນພື້ນຖານຊັບພະຍາກອນຂອງຝ່າຍລາວ ເຊັ່ນ: ເພີ່ມທະວີການຖອດຖອນບົດຮຽນເຊິ່ງກັນແລະກັນ, ເພີ່ມທະວີການສະໜັບສະໜູນດ້ານການເງິນ ແລະ ເຕັກນິກກະສິກຳ, ຊຸກຍູ້ການກໍ່ສ້າງພື້ນຖານໂຄງລ່າງ ປະສານສົມທົບກັບການພັດທະນາຊົນນະບົດ, ເພີ່ມທະວີການສຶກສາວິຊາຊີບ ແລະ ການຝຶກອົບຮົມສີມື ແຮງງານ ແລະ ຄົ້ນຄວ້າການຮ່ວມມືດ້ານການທ່ອງທ່ຽວແບບຍືນຍົງເປັນຕົ້ນ. (ທ່ານ ອາໂນສັກ ແພງທິມມະວົງ ຮອງຫົວໜ້າກົມພັດທະນາຊົນນະບົດ ກະຊວງກະສິກຳ ແລະ ປ່າໄມ້)

## ອ່ານເຂົ້າໃຈ "ຄຳເຫັນຂອງທ່ານ ສີຈິ້ນຜິງ" ຈາກການພັດທະນາເສັ້ນທາງລົດໄຟ ລາວ-ຈີນ



ທ່ານ ສີຈິ້ນຜິງ ປະທານປະເທດຈີນ ເຄີຍກ່າວວ່າ: "ມະນຸດໄດ້ຮ່ວມຊີວິດໃນໂລກໜ່ວຍດຽວ, ດຳລົງຊີວິດຢູ່ໃນໂລກ ທີ່ມີປະຫວັດສາດ ແລະ ສະພາບຕົວຈິງອັນດຽວກັນ, ນັບມື້ໄດ້ຂະຫຍາຍຕົວເປັນປະຊາຄົມຮ່ວມຊາຕາກຳທີ່ເຊື່ອມໂຍງເຂົ້າກັນ." ການສ້າງສາ, ການນຳໃຊ້ ແລະ ການພັດທະນາເສັ້ນທາງລົດໄຟ ລາວ-ຈີນ ໄດ້ອະທິບາຍຄຳເວົ້າດັ່ງກ່າວ ຢ່າງມີຊີວິດຊີວາ.

ນັບແຕ່ເສັ້ນທາງລົດໄຟ ລາວ-ຈີນ ໄດ້ເປີດນຳໃຊ້ຢ່າງເປັນທາງການ ໃນວັນ 3 ທັນວາ 2021 ເປັນຕົ້ນມາ, ເສັ້ນທາງລົດໄຟສາຍນີ້ ໄດ້ປ່ຽນແປງສະພາບການເສດຖະກິດພູມິພາກຂອງລາວ ຢ່າງເຖິງຖອງ. ໃນໄລຍະດົນນານມາແລ້ວ, ການພັດທະນາຂອງລາວ ມີຄວາມຈຳກັດຫຼາຍ ຍ້ອນເປັນປະເທດ "ບໍ່ມີຊາຍແດນຕິດກັບທະເລ". ປັດຈຸບັນ, ເສັ້ນທາງລົດໄຟສາຍນີ້ ທີ່ມີຄວາມຍາວທັງໝົດ 1.035 ກິໂລແມັດ, ເຮັດໃຫ້ປະເທດລາວກາຍເປັນ "ສູນກາງການຄົມມະນາຄົມຂົນສົ່ງຂອງພາກພື້ນ" ທີ່ເຊື່ອມຕໍ່ຈີນ ແລະ ບັນດາປະເທດໃນແຫຼມອິນດູຈີນ.

ໃນຖານະເປັນສູນກາງໃນການຈໍລະຈອນສິນຄ້າຂອງພາກພື້ນ, ເສັ້ນທາງລົດໄຟ ລາວ-ຈີນ ພວມໄດ້ສ້າງສະພາບເສດຖະກິດ-ການຄ້າ ຂອງລາວຄືນໃໝ່. ພາຍຫຼັງເປີດນຳໃຊ້ເສັ້ນທາງລົດໄຟແລ້ວ, ຕົ້ນທຶນດ້ານການຂົນສົ່ງສິນຄ້າຂ້າມຊາຍແດນໄດ້ຫຼຸດລົງ 40% ຂຶ້ນໄປ, ຜະລິດຕະພັນກະສິກຳຕ່າງໆ ຂອງລາວ ເຊັ່ນ: ກາເຟ, ໝາກໄມ້ເປັນຕົ້ນ ໄດ້ຖືກຂົນສົ່ງໄປເຖິງຕະຫຼາດຈີນດ້ວຍຂະບວນລົດໄຟໂດຍກົງ. ສ່ວນຜະລິດຕະພັນເຄື່ອງຈັກເອເລັກໂຕຣນິກ ແລະ ເຄື່ອງໃຊ້ປະຈຳວັນຕ່າງໆຂອງຈີນ ກໍຖືກຂົນສົ່ງໄປເຖິງຕົວເມືອງ ແລະ ຊົນນະບົດຂອງລາວ ໂດຍຜ່ານເສັ້ນທາງລົດໄຟ.

ຂະແໜງການທ່ອງທ່ຽວເປັນຂະແໜງການທີ່ໄດ້ຮັບຜົນປະໂຫຍດໂດຍກົງທີ່ສຸດ. ເສັ້ນທາງລົດໄຟໄດ້ຂົນສົ່ງນັກທ່ອງທ່ຽວ ໄປເຖິງແຫຼ່ງທ່ອງທ່ຽວລະດັບຊາດຕ່າງໆຂອງລາວ ເຊັ່ນ: ເມືອງເກົ່າຫຼວງພະບາງ, ເມືອງວັງວຽງ ແລະ ອື່ນໆ, ນັກທ່ອງທ່ຽວຈີນ ສາມາດເດີນທາງໄປເຖິງແຫຼ່ງທ່ອງທ່ຽວທີ່ມີຊື່ສຽງຕ່າງໆຂອງລາວ ດ້ວຍຂະບວນລົດໄຟ "ລ້ານຊ້າງ". ອີງຕາມພາກສ່ວນທ່ອງທ່ຽວຂອງລາວຄາດຄະເນວ່າ: ຄຽງຄູ່ກັບຂະບວນລົດໄຟໂດຍສານສາກົນຕາມເສັ້ນທາງລົດໄຟ ລາວ-ຈີນ ໄດ້ເພີ່ມຫຼາຍຂຶ້ນ, ນັກທ່ອງທ່ຽວຈີນ ທີ່ໄປທ່ອງທ່ຽວປະເທດລາວ ໃນປີ 2025 ອາດຈະບັນລຸຫຼາຍກວ່າ 1 ລ້ານເທື່ອຄົນ, ລາຍຮັບຈາກການທ່ອງທ່ຽວຂອງລາວ ຈະກວມ 15% ຂອງ GDP ຂອງລາວ.

ປີນີ້ແມ່ນປີສະຖາປະນາສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ຄົບຮອບ 50 ປີ, ໃນໂອກາດທີ່ມີຄວາມໝາຍພິເສດນີ້, ພວກເຮົາຈະສັງເກດເຫັນວ່າ: ຄວາມໝາຍຂອງເສັ້ນທາງລົດໄຟ ລາວ-ຈີນ ຈະບໍ່ເປັນພຽງໂຄງການຄົມມະນາຄົມເທົ່ານັ້ນ. ດັ່ງຄຳເວົ້າຂອງທ່ານ ສອນໄຊ ສີພັນດອນ ນາຍົກລັດຖະມົນຕີແຫ່ງ ສປປ ລາວ ທີ່ວ່າ: "ເສັ້ນທາງລົດໄຟສາຍນີ້ ເຮັດໃຫ້ລາວ ເຊື່ອມຕໍ່ກັບທະເລ ແລະ ໂລກ". ຕອນເຊົ້າ, ເມື່ອລົດໄຟຂະບວນທຳອິດເດີນທາງອອກຈາກນະຄອນຫຼວງວຽງຈັນໄປສູ່ນະຄອນຄຸນໝິງຂອງຈີນ, ເສັ້ນທາງລົດໄຟສາຍນີ້ ທັງແມ່ນເສັ້ນທາງການຄ້າສຳລັບຜະລິດຕະພັນກະສິກຳລາວ ມຸ່ງໜ້າໄປສູ່ຕະຫຼາດອັນກວ້າງໃຫຍ່ໄພສານທີ່ມີປະຊາກອນ 1,4 ຕື້ຄົນ, ກໍແມ່ນ "ເສັ້ນທາງແຫ່ງການພັດທະນາ" ສຳລັບປະຊາຊົນສອງຊາດ ລາວ ແລະ ຈີນ, ຮ່ວມກັນມຸ່ງໜ້າໄປສູ່ອະນາຄົດ. (ທ່ານ ປອ ບຸນສີ ພຸດທະວົງ ຫົວໜ້າສະຖາບັນຄົ້ນຄວ້າສັງຄົມວິທະຍາ ຂອງສະຖາບັນວິທະຍາສາດເສດຖະກິດ ແລະ ສັງຄົມແຫ່ງຊາດ)

(ສະໜອງຂໍ້ມູນໂດຍ: ສູນການສື່ສານສາກົນພາກພື້ນອາຊີໃຕ້-ອາຊີຕາເວັນອອກສ່ຽງໃຕ້ ແຂວງຢຸນນານ)

ynzhanba@163.com
laos.yunnangateway.com